ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 25 ຫາ 29 ທັນວາ 2023




ວາງສິລາລຶກໂຄງການກໍ່ສ້າງໂຮງງານແປ້ງມັນຕົ້ນ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ວາງສີລາລຶກໂຄງການກໍ່ສ້າງໂຮງງານແປ້ງມັນຕົ້ນ

ໃນວັນທີ 29 ພະຈິກ 2023 ຢູ່ທີ່ ເມືອງບາຈຽງຈະເລີນສຸກ, ແຂວງ ຈຳປາສັກ ໄດ້ມີພິທີວາງສີລາລຶກໂຄງການກໍ່ສ້າງໂຮງງານແປ້ງມັນຕົ້ນ ຂອງ ເອໄອດີຊີ-ອຸ່ງມເຮັງ. ໂດຍການເປັນປະທານ ຂອງ ທ່ານ ນ. ປານີ ຢ່າທໍ່ຕູ້ ຮອງປະທານປະເທດ ແຫ່ງ ສປປ ລາວ. ເຂົ້າຮ່ວມມີ ທ່ານ ປອ. ວີໄລວົງ ບຸດດາຄຳ ເຈົ້າແຂວງໆຈຳປາສັກ, ທ່ານ ປອ. ເພັດ ພົມພິພັກ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້. ມີບັນດາຫົວໜ້າ-ຮອງຫົວໜ້າພະແນກການ ພາຍໃນແຂວງ, ແຂກຕາງໜ້າຈາກສູນກາງ, ປະທານບໍລິສັດ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ພຶດສະພາ ພູມມະສັກ ປະທານ ບໍລິສັດ ເອໄອດີຊີ ຈຳກັດຜູ້ດຽວ ໄດ້ຂຶ້ນລາຍງານໃຫ້ຮູ້ວ່າ: ໃນການລົງທຶນກໍ່ສ້າງ ໂຮງງານປຸງແຕ່ງມັນຕົ້ນ ເນື້ອທີ່ 140 ເຮັກຕາ ຢູ່ທີ່ບ້ານ ຂັນລາຍ, ບ້ານ ເພຍລາດ, ເມືອງ ບາຈຽງຈະເລີນສຸກ, ແຂວງ ຈຳປາສັກ ແມ່ນປະຕິບັດຕາມ ສັນຍາຮ່ວມມືສາມຝ່າຍຄື: ກະຊວງກະສິກຳ ແລະ ປ່າໄມ້, ແຂວງຈຳປາສັກ ແລະ ຝ່າຍບໍລິສັດ ຄັ້ງວັນທີ 28 ສິງຫາ 2021 ແລະ ບົດບັນທຶກຄວາມເຂົ້າໃຈ (MOU) ໃນຄັ້ງວັນທີ 20 ທັນວາ 2022 ບໍລິສັດ ແປ້ງມັນຕົ້ນ ເອໄອດີຊີ-ອຸ່ງມເຮັງ ຈຳກັດ ແມ່ນເປັນບໍລິສັດທີ່ມີຮູບແບບການລົງທຶນເປັນວິສາຫະກິດປະສົມ ລາວ-ໄທ ເປັນການຮ່ວມມືລະຫວ່າງ ບໍລິສັດ ເອໄອດີຊີ ເທຣດດິ້ງ ແລະ ບໍລິສັດ ອຸ່ງມເຮັງ ອິນເຕີ ໂຮດິ້ງ ຈຳກັດ. ດັ່ງນັ້ນ ທັງສອງບໍລິສັດ ຈຶ່ງຮ່ວມກັນສ້າງແຜນພັດທະນາ ເພື່ອຍົກລະດັບສິນຄ້າມັນຕົ້ນໃນ ສປປ ລາວ ໃຫ້ມີມູນຄ່າສູງຂຶ້ນຫຼາຍເທົ່າຕົວ, ເຊິ່ງເປົ້າໝາຍແມ່ນຈະສ້າງ




ໂຮງງານດັ່ງກ່າວ ໃຫ້ເປັນຕົ້ນແບບ ຂອງ ສປປ ລາວ ທີ່ໃຊ້ເຕັກໂນໂລຊີການຜະລິດທີ່ທັນສະໄໝ ເປັນມິດຕໍ່ສິ່ງແວດລ້ອມ ແລະ ມີການຜະລິດທີ່ໄດ້ຄຸນນະພາບ ທຽບເທົ່າລະດັບສາກົນ ເພື່ອສາມາດສົ່ງອອກໄປຕົຕະຫຼາດຕ່າງປະເທດໃຫ້ໄດ້ຫຼາຍທີ່ສຸດ ຊຶ່ງຈະພາໄປສູ່ການໄດ້ຮັບເງິນຕາຕ່າງປະເທດ ມາໝູນວຽນໃນລະບົບເສດຖະກິດ ລວມທັງສາມາດສ້າງອາຊີບໃຫ້ແກ່ແຮງງານພາຍໃນອີກດ້ວຍ. ສຳລັບມູນຄ່າການລົງທຶນທັງໝົດແມ່ນ 37 ລ້ານໂດລາສະຫະລັດ ໃນນັ້ນລວມມີ ການກໍ່ສ້າງໂຮງງານແປ້ງມັນຕົ້ນ (ອາຄານ+ເຄື່ອງຈັກ) ແລະ ການກໍ່ສ້າງໂຮງງານຜະລິດແກັສຊີວະພາບ. ເພື່ອເຮັດໃຫ້ພິທີດັ່ງກ່າວມີຄວາມໝາຍສຳຄັນ ປະທານພິທີ ພ້ອມດ້ວຍ ການນຳຂອງແຂວງ, ຈາກສູນກາງ ແລະ ປະທານບໍລິສັດ ໄດ້ຮ່ວມກັນຕັດແຖບຜ້າ ພ້ອມທັງລັ່ນຄ້ອງ 9 ບາດ ແລະ ປ່ອຍປຸມເປົ້າ ເພື່ອເປັນການເປີດການກໍ່ສ້າງຂອງໂຄງການຢ່າງເປັນທາງການ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໄຊລາ ສິມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂາວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປາໄມ;